1- ປີ 2008, ສອງຝ່າຍ ໄດ້ຜັນຂະຫຍາຍປະຕິບັດບັນດາຂໍ້ຕົກລົງ, ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນຢ່າງທັນການ. ບັນດາກະຊວງ, ຂະແໜງການ, ທ້ອງຖິ່ນສອງຝ່າຍ ໄດ້ມີການເຄື່ອນໄຫວຊ່ວຍເຫລືອເຊິ່ງກັນ ແລະ ກັນ ດ້ວຍຫລາຍຮູບການ ແລະ ມີປະສິດທິຜົນ, ການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງສອງປະເທດ ບັນລຸໄດ້ໝາກຜົນຢ່າງຕັ້ງໜ້າ.

2- ການຮ່ວມມືດ້ານການສຶກສາ ແລະ ກໍ່ສ້າງ ໄດ້ຮັບການບູລິມະສິດຈາກສອງຝ່າຍ, ຈຳນວນນັກຮຽນຮັບໃໝ່ໃນປີ 2008 ຍັງຮັກສາຢູ່ໃນລະດັບສູງ ຈຳນວນ 718 ຄົນ, ເພີ້ມຂຶ້ນ 12% ທຽບໃສ່ປີ 2007, ເພີ້ມຂຶ້ນ 10,8% ທຽບໃສ່ແຜນການທີ່ໄດ້ຕົກລົງໃນຕົ້ນປີ. ສອງຝ່າຍ ສືບຕໍ່ເອົາໃຈໃສ່ກໍ່ສ້າງ ດ້ວຍຫລາຍຮູບການທີ່ສອດຄ່ອງກັບແຕ່ລະເປົ້າໝາຍ, ນຳໃຊ້ມາດຕະການຕ່າງໆ ທີ່ແທດຕົວຈິງ ແນໃສ່ຍົກສູງຄຸນນະພາບການກໍ່ສ້າງ.

ການພົວພັນການຄ້າ, ການລົງທຶນ ມີການຫັນປ່ຽນຢ່າງຕັ້ງໜ້າ. ມູນຄ່າການຄ້າຂາອອກ-ຂາເຂົ້າ ລະຫວ່າງສອງປະເທດ ໃນ 10 ເດືອນຕົ້ນປີ 2008 ບັນລຸ 374,4 ລ້ານໂດລາສະຫະລັດ (ຄາດຄະເນໝົດ ປີ 2008, ບັນລຸ 450 ລ້ານໂດລາສະຫະລັດ, ເພີ້ມຂຶ້ນ 44% ທຽບໃສ່ປີ 2007). ໃນນັ້ນ, ມູນຄ່າການສົ່ງອອກຂອງລາວໄປຫວຽດນາມ ບັນລຸໄດ້ 248,8 ລ້ານໂດລາສະຫະລັດ (ເພີ້ມຂຶ້ນ 35% ທຽບໃສ່ໄລຍະດຽວກັນ), ລາວນຳເຂົ້າ ຈາກຫວຽດນາມ ບັນລຸໄດ້ 125,6 ລ້ານໂດລາສະຫະລັດ (ເພີ້ມຂຶ້ນ 50% ທຽບໃສ່ໄລຍະດຽວກັນ). ການເຄື່ອນໄຫວລົງທຶນຂອງບັນດາວິສາຫະກິດຫວຽດນາມຢູ່ລາວ ນັບມື້ນັບມີຄວາມສະຫງົບປົກກະຕິ ແລະ ມີຄວາມກ້າວໜ້າກ່ວາເກົ່າ. ມາຮອດເດືອນ 11/2008, ລັດຖະບານລາວ ໄດ້ອອກໃບອະນຸຍາດການລົງທຶນໃຫ້ແກ່ 157 ໂຄງການ, ມູນຄ່າ 810,877 ລ້ານໂດລາສະຫະລັດ. ພົ້ນເດັ່ນແມ່ນໃນປີ 2008, ຫວຽດນາມຢູ່ໃນອັນດັບ 01 ຂອງບັນດາປະເທດ ທີ່ກຳລັງລົງທຶນຢູ່ລາວ; ໃນນັ້ນ, ມີຫລາຍໂຄງການທີ່ມີຂະໜາດໃຫຍ່ ແລະ ມູນຄ່າການລົງທຶນສູງ ໃນຂົງເຂດພະລັງງານໄຟຟ້າ, ບໍ່ແຮ່ ແລະ ປູກຕົ້ນໄມ້ອຸດສາຫະກຳ. ຄວາມຄືບໜ້າຂອງໂຄງການຕ່າງໆ ພວມໄດ້ຮັບການຜັນຂະຫຍາຍປະຕິບັດຈາກບັນດາບໍລິສັດ ຕາມການຕົກລົງທີ່ໄດ້ເຊັນກັນ.

ບັນດາໂຄງການທີ່ນຳໃຊ້ທຶນຊ່ວຍເຫລືອ ເຖິງວ່າຈະພົບຄວາມຫຍຸ້ງຍາກ ກ່ຽວກັບການເໜັງຕີງຂອງລາຄາວັດສະດຸກໍ່ສ້າງ ແລະ ນ້ຳມັນເຊື້ອໄຟ ແຕ່ຄວາມຄືບໜ້າໃນການປະຕິບັດໂຄງການຕ່າງໆ ກໍ່ໄດ້ບັນລຸຕາມທີ່ໄດ້ຕົກລົງກັນ, ຮັບປະກັນປະຕິບັດສຳເລັດ, ມອບ-ຮັບ ຖືກຕ້ອງຕາມກຳນົດເວລາ.

ການຮ່ວມມືລະຫວ່າງ ທ້ອງຖິ່ນຕ່າງໆ ໂດຍສະເພາະບັນດາທ້ອງຖິ່ນຊາຍແດນ ແມ່ນນັບມື້ນັບເຂົ້າສູ່ລວງເລິກ, ມີປະສິດທິຜົນ, ປະກອບສ່ວນເຂົ້າໃນການປັບປຸງ ແລະ ເສີມຂະຫຍາຍສາຍພົວພັນພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງປະເທດ. ການຮ່ວມມືພັດທະນາຮອບດ້ານເຂດຊາຍແດນ ໃຫ້ມີສະຖຽນລະພາບ, ສອງຝ່າຍໄດ້ເອົາໃຈໃສ່ລົງທຶນໃນຫລາຍກິດຈະການ, ໂຄງການ ທີ່ແທດກັບຕົວຈິງ ເຊິ່ງພວມໄດ້ຮັບການຜັນຂະຫຍາຍ ແລະ ໄດ້ຮັບໝາກຜົນຢ່າງໜ້າເພິ່ງພໍໃຈ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຮັບປະກັນຄວາມສະຫງົບທາງດ້ານການເມືອງຢູ່ເຂດຊາຍແດນ.

ບັນດາກົນໄກ ແນໃສ່ສ້າງເງື່ອນໄຂສະດວກໃຫ້ແກ່ຄົນ, ພາຫະນະ, ສິນຄ້າຜ່ານຊາຍແດນ ລະຫວ່າງສອງປະເທດ ໄດ້ເສີມຂະຫຍາຍປະສິດທິຜົນໃນເບື້ອງຕົ້ນ, ປະກອບສ່ວນຊຸກຍູ້ການຮ່ວມມື ລົງທຶນ, ການຄ້າລະຫວ່າງສອງຝ່າຍ ຢ່າງແຂງແຮງ.

ຢ່າງໃດກໍ່ດີ, ໝາກຜົນການຮ່ວມມື ລະຫວ່າງສອງຝ່າຍ ຍັງບໍ່ທັນບັນລຸໄດ້ຕາມຄວາມຕ້ອງການ, ບໍ່ທັນເສີມຂະຫຍາຍຄວາມອາດສາມາດປົ່ມຊ້ອນ, ການພົວພັນ ແລະ ການບູລິມະສິດຜ່ອນຜັນ ເຊິ່ງກັນ ແລະ ກັນ ລະຫວ່າງສອງປະເທດຢ່າງແຂງແຮງ ແລະ ມີປະສິດທິຜົນ.

ຈຳນວນນັກຮຽນ ໄປຮຽນຫລາຍ ແຕ່ຄຸນນະພາບການກໍ່ສ້າງບໍ່ທັນສະໝໍ່າສະເໝີ, ຜົນການຮ່ຳຮຽນ ກໍ່ມີການຫັນປ່ຽນ ແຕ່ຍັງບໍ່ທັນສະໝໍ່າສະເໝີ ຢູ່ໃນໂຮງຮຽນຕ່າງໆ, ຕ້ອງມີການປະສານສົມທົບ ໃຫ້ແໜ້ນແຟ້ນກ່ວາເກົ່າ ລະຫວ່າງສອງຝ່າຍ ໃນການຈັດຕັ້ງ, ປຸກລະດົມ, ສົ່ງເສີມຂະບວນການຍົກສູງຄຸນນະພາບການກໍ່ສ້າງໃນໝູ່ນັກຮຽນ, ນັກສຶກສາ. ມູນຄ່າການຄ້າລະຫວ່າງສອງປະເທດ ເພີ້ມຂຶ້ນ ແຕ່ຈັງຫວະຍັງຊັກຊ້າ, ຮຽກຮ້ອງຕ້ອງມີຫລາຍມາດຕະການກ່ວາເກົ່າ ເພື່ອເສີມຂະຫຍາຍຢ່າງສັງລວມ ບັນດາຄວາມອາດສາມາດປົ່ມຊ້ອນຂອງທຸກພາກສ່ວນເສດຖະກິດ, ປະກອບສ່ວນປະຕິບັດມູນຄ່າການຄ້າຂາອອກ-ຂາເຂົ້າລະຫວ່າງສອປະເທດ ໃຫ້ບັນລຸຕາມເປົ້າໝາຍ 1 ຕື້ ໂດລາສະຫະລັດ ໃນປີ 2010 ແລະ 2 ຕື້ໂດລາສະຫະລັດ ໃນປີ 2015.

ການເຄື່ອນໄຫວລົງທຶນບັນລຸໝາກຜົນທີ່ຕັ້ງໜ້າ, ແຕ່ການປະຕິບັດລະບອບລາຍງານຂອງເກືອບທຸກບໍລິສັດບໍ່ທັນໄດ້ປະຕິບັດຕາມຂໍ້ກຳນົດ; ຍັງມີບາງວິສາຫະກິດ ລະເມີດຂໍ້ກຳນົດຕ່າງໆ, ຂັດແຍ່ງພາຍໃນ, ຍາດຊິງໂຄງການ, ເຮັດໃຫ້ເສຍຄວາມສາມັກຄີພາຍໃນບັນດາວິສາຫະກິດຫວຽດນາມ... ສິ່ງຜົນສະທ້ອນຕໍ່ພາບພົດ ແລະ ໝາກຜົນທີ່ຍາດມາໄດ້ຂອງບັນດາວິສາຫະກິດຫວຽດນາມ.

ການຜັນຂະຫຍາຍໂຄງການນຳໃຊ້ທຶນຊ່ວຍເຫລືອຈຳນວນໜຶ່ງ ຍັງຊັກຊ້າ, ການກະກຽມໂຄງການຍັງແກ່ຍາວ, ເຮັດໃຫ້ມູນຄ່າໂຄງການເພີ້ມຂຶ້ນທຽບໃສ່ການອະນຸມັດໃນເບື້ອງຕົ້ນ, ມີຜົນສະທ້ອນຕໍ່ແຜນການທີ່ສອງຝ່າຍໄດ້ຕົກລົງກັນ.

III- ທິດທາງ ແລະ ໜ້າທີ່ຕົ້ນຕໍ ກ່ຽວກັບການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ປີ 2009.

ໂດຍປະຕິບັດຕາມຈິດໃຈຊີ້ນຳ ຂອງກົມການເມືອງສູນກາງພັກປະຊາຊົນ ປະຕິວັດລາວ ແລະ ກົມການເມືອງສູນກາງພັກກອມມູນິດຫວຽດນາມ; ບົນພື້ນຖານສັນຍາຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ ໄລຍະ 2006-2010 ລະຫວ່າງສອງລັດຖະບານ ແລະ ອີງໃສ່ສະພາບການຕົວຈິງ ຂອງສອງປະເທດ ແລະ ພາກພື້ນ, ສອງຝ່າຍ ຢືນຢັນຄວາມຕັດສິນໃຈໃນການສືບຕໍ່ປັບປຸງ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງປະເທດໃນໄລຍະໃໝ່ຢ່າງບໍ່ຢຸດຢັ້ງ; ສືບຕໍ່ປະຕິບັດ 6 ແຜນງານ ທີ່ເປັນເປົ້າໝາຍ ທີ່ໄດ້ຕົກລົງກັນໃນສັນຍາຮ່ວມມື ໄລຍະ 2006-2010 ລະຫວ່າງສອງລັດຖະບານ, ໃນປີ 2009 ສອງຝ່າຍຕົກລົງບັນດາບັນຫາການຮ່ວມມື, ລະອຽດຄືດັ່ງລຸ່ມນີ້:

1- ດ້ານການກໍ່ສ້າງພັດທະນາຊັບພະຍາກອນມະນຸດ, ສອງຝ່າຍຢືນຢັນສືບຕໍ່ປະຕິບັດອະນຸສັນ ຍາວ່າດ້ວຍການຮ່ວມມື ດ້ານການກໍ່ສ້າງພະນັກງານ, ນັກສຶກສາ ທີ່ໄດ້ເຊັນກັນຄັ້ງວັນທີ 15 ເດືອນ ມັງກອນ(01) ປີ 2002. ສືບຕໍ່ໃຫ້ບູລິມະສິດ ແກ່ການບໍາລຸງ ກໍ່ສ້າງພະນັກງານການເມືອງ, ພະນັກງານ ຄຸ້ມຄອງຕາມລະດັບການສຶກສາຊັ້ນຕ່າງໆ; ພະນັກງານທ້ອງຖິ່ນ ຢູ່ເຂດສາມຫລ່ຽມພັດທະນາສາມ ປະເທດກໍາປູເຈັຍ-ລາວ-ຫວຽດນາມ (CLV) ແລະ ບັນດາແຂວງທີ່ມີຊາຍແດນຕິດກັບຫວຽດນາມ; ພະນັກງານ ບັນດາກະຊວງ, ຂະແໜງການ, ທ້ອງຖິ່ນຂອງລາວ ທີ່ໄດ້ບໍາລຸງສ້າງຢູ່ຫວຽດນາມ ແລະ ພະນັກງານທີ່ ພວມເຮັດວຽກຢູ່ບັນດາກິດຈະການ, ໂຄງການຮ່ວມມື ລະຫວ່າງສອງຝ່າຍ.

ມອບໃຫ້ສອງກະຊວງສຶກສາ ແລະ ກໍ່ສ້າງ ສອງປະເທດປະຕິບັດບັນດາມາດຕະການຍົກສູງຄຸນ ນະພາບການກໍ່ສ້າງຢ່າງເຂັ້ມງວດ, ຮັບປະກັນຂອດການສອບເສັງຄັດເລືອກສິ່ງໄປຮຽນ (ສິ້ນເຂົ້າ); ເພີ້ມ ທະວີການຕິດຕາມ, ກວດກາ, ຄຸ້ມຄອງນັກສຶກສາລາວ, ປະຕິບັດລະບຽບການຮຽນຢ່າງເຂັ້ມງວດ; ດໍາເນີນການສະຫລຸບຕີລາຄາຮອບດ້ານ ກ່ຽວກັບການຮ່ວມມືດ້ານການສຶກສາ ລະຫວ່າງສອງປະເທດ ໃນໄລຍະຜ່ານມາ, ກໍານົດບັນດາມາດຕະການແກ້ໄຂ ເພື່ອລາຍງານໃຫ້ສອງລັດຖະບານ ໃນກອງປະຊຸມ ກາງສະໄໝ ປີ 2009. ຕົກລົງສືບຕໍ່ການລົງທຶນ ຍົກລະດັບພື້ນຖານວັດຖຸການດໍາລົງຊີວິດໃຫ້ແກ່ພະນັກ ງານ, ນັກສຶກສາຂອງແຕ່ລະຝ່າຍ.

ສອງຝ່າຍສົ່ງເສີມການກໍ່ສ້າງພະນັກງານ, ນັກສຶກສາຂອງແຕ່ລະຝ່າຍ ໃນແຕ່ລະຂະແໜງ ການ, ຂັ້ນຮຽນຕ່າງໆ ດ້ວຍແຫລ່ງທຶນສ່ວນຕົວຂອງບຸກຄົນ ຫລື ດ້ວຍແຫລ່ງທຶນຂອງ ບັນດາການຈັດຕັ້ງ, ວິສາຫະກິດ, ປະເທດອື່ນໆ ຊ່ວຍເຫລືອ.

2- ສອງຝ່າຍສົ່ງເສີມ, ປະສານສົມທົບສ້າງ ແລະ ຈັດຕັ້ງປະຕິບັດບັນດາແຜນການ, ຕົວແບບ ການຮ່ວມມືລົງທຶນໃນດ້ານການຜະລິດກະສິກໍາ, ປ່າໄມ້ ຢູ່ບັນດາເຂດຊາຍແດນສອງປະເທດ, ເປັນຕົ້ນ ແມ່ນການປູກພືດ, ລ້ຽງສັດ, ລ້ຽງປາ, ປູກໄມ້, ຂະຫຍາຍເຄື່ອງປ່າຂອງດົງ ແລະ ຮ່ວມກັນຄຸ້ມຄອງຊັບ ພະຍາກອນທໍາມະຊາດແບບຍືນຍົງ; ສ້າງແຜນກໍານົດການພັດທະນາເສດຖະກິດ-ສັງຄົມ ພ້ອມກັບການ ບູລິມະສິດແຫລ່ງທຶນ ເພື່ອລົງທຶນກໍ່ສ້າງບັນດາເສັ້ນທາງເຊື່ອມຕໍ່ ລະຫວ່າງສອງປະເທດ; ອໍານວຍເງື່ອນ ໄຂສະດວກໃຫ້ແກ່ການສ້າງ ແລະ ພັດທະນາຕະຫລາດຊາຍແດນ ຢູ່ເຂດເສດຖະກິດດ່ານຊາຍແດນ, ຊຸກຍູ້ການພັດທະນາການຄ້າຊາຍແດນ; ສືບຕໍ່ພິຈາລະນາຍົກລະດັບຄູ່ດ່ານຊາຍແດນຕ່າງໆ ໂດຍສອດ ຄ່ອງກັບສະພາບການພັດທະນາຂອງສອງປະເທດ. ສົ່ງເສີມການຮ່ວມມືພັດທະນາລະຫວ່າງ ບັນດາທ້ອງ ຖິ່ນຊາຍແດນສອງປະເທດ ແລະ ສະກັດກັ້ນການຄ້າຊາຍລັບຫລີກໜີພາສີ, ການຄ້າຊາຍທີ່ຜິດກົດ ໝາຍ. ໂດຍສະເພາະແມ່ນບູລິມະສິດການຮ່ວມມືລົງທຶນ ຢູ່ບັນດາແຂວງທີ່ທຸກຍາກ, ເຂດຫ່າງໄກສອກ ຫລີກຂອງລາວ ທີ່ມີຊາຍແດນຕິດກັບຫວຽດນາມ ແນໃສ່ແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດ ການເປັນຢູ່ຂອງປະຊາຊົນ.

ສືບຕໍ່ຊຸກຍູ້ໂຄງການຮ່ວມມື ແລະ ແລກປ່ຽນບົດຮຽນໃນຂົງເຂດກະສິກໍາ, ປ່າໄມ້, ການປະມົງ, ອຸ ຕຸນິຍົມ-ອຸທິກກະສາດ, ສິ່ງແວດລ້ອມ, ການຄຸ້ມຄອງຊັບພະຍາກອນດ້ວຍຫລາຍຮູບການ; ເອົາການປົກ ປັກຮັກສາປ່າໄມ້ຕິດພັນກັບການຈັດຕັ້ງພູມລໍາເນົາຄົງທີ່ ແລະປົກປັກຮັກສາສິ່ງແວດລ້ອມ ໂດຍສະເພາະ ຢູ່ເຂດຊາຍແດນ.

3- ສົ່ງເສີມ ແລະ ອຳນວຍເງື່ອນໄຂໃຫ້ແກ່ການເຄື່ອນໄຫວພົວພັນແລກປ່ຽນວັດທະນະທຳ, ສົ່ງເສີມ ແລະ ໂຄສະນາການທ່ອງທ່ຽວ, ລາຍການທ່ອງທ່ຽວຄົບວົງຈອນ ແລະ ເຊື່ອມຕໍ່ລະຫວ່າງສອງປະເທດ ແນໃສ່ຕອບສະໜອງຄວາມຕ້ອງ ການໃນການທ່ອງທ່ຽວຂອງປະຊາຊົນສອງປະເທດ ແລະ ນັກທ່ອງທ່ຽວຈາກປະເທດທີສາມ ມາທ່ຽວສອງປະເທດດ້ວຍທາງບົກ, ທາງອາກາດ; ປະສານສົມທົບກັບ ກຳປູເຈ ເພື່ອປະຕິບັດລາຍການ "ສາມປະເທດ-ຈຸດໝາຍປາຍທາງທ່ອງທ່ຽວອັນດຽວ".

ຝ່າຍຫວຽດນາມ ຊ່ວຍຝ່າຍລາວ ຈັດຕັ້ງໃຫ້ສຳເລັດຜົນ ງານມະຫາກຳກິລາ SEAGames ຄັ້ງທີ 25 ປີ 2009 ຢູ່ລາວ ແລະ ຄະນະນັກກິລາລາວ ໃຫ້ໄດ້ຮັບຜົນສຳເລັດສູງ.

ປະສານສົມທົບກັນຮ່ວມມືໃນຂົງເຂດປ້ອງກັນ, ຄວບຄຸມ, ຕ້ານການລະບາດຂອງພະຍາດພະຍຸ ແລະ ປະຕິບັດສັນຍາກວດກາດ້ານສາທາລະນະສຸກຊາຍແດນລະຫວ່າງສອງປະເທດ.

ສອງຝ່າຍເປັນເອກະພາບ ເພີ້ມທະວີການຮ່ວມມືໃນຂົງເຂດຂ່າວສານໜັງສືພິມ, ການພິມຈຳໜ່າຍ, ວິທະຍຸ, ໂທລະພາບ. ຝ່າຍຫວຽດນາມ ກຽມພ້ອມສົ່ງຊ່ຽວຊານ ແລະ ແລກປ່ຽນບົດຮຽນ ກ່ຽວກັບ ບັນດາບັນຫາວັດທະນະທຳ, ສັງຄົມ, ຖະແຫລງຂ່າວ, ໂທລະຄົມມະນາຄົມ, ວຽກເຮັດງານທຳ, ການລົບລ້າງຄວາມທຸກຍາກ; ການຮ່ວມມືຢ່າງແໜ້ນແຟ້ນ ເພື່ອກວດກາສະກັດກັ້ນການຫລົບຫລີກໜີພາສີ, ການຄ້າຂາຍທີ່ຜິດກົດໝາຍ, ການຄ້າຂາຍ, ຂົນສົ່ງທາດເສບຕິດທີ່ຜິດກົດໝາຍຜ່ານຊາຍແດນ; ການຄ້າແມ່ຍິງ ແລະ ເດັກນ້ອຍ.

ສອງຝ່າຍດຳເນີນການແລກປ່ຽນນັກຂ່າວໜັງສືພິມ ແນໃສ່ເພີ້ມທະວີຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ທາງດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ, ສັງຄົມ ລະຫ່ວາງປະຊາຊົນສອງປະເທດ ແລະ ໃນພາກພື້ນ.

ສອງຝ່າຍບູລິມະສິດ, ອຳນວຍເງື່ອນໄຂສະດວກໃນການປະສານສົມທົບກັນຊອກຄົ້ນ, ເກັບກູ້, ທ້ອນໂຮມອັດຖິຂອງທະຫານອາສາສະໝັກຫວຽດນາມທີ່ເສຍສະຫລະຊີວິດໃນປາງສົງຄາມຢູ່ລາວ ເພື່ອຈັດສົ່ງກັບຄືນປະເທດ.

4- ສອງຝ່າຍສະໜັບສະໜູນ ແລະ ມອບໃຫ້ຂະແໜງການຄ້າສອງຝ່າຍ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ຂະແໜງການ, ທ້ອງຖິ່ນສອງປະເທດ ຜັນຂະຫຍາຍປະຕິບັດໂຄງການພັດທະນາການຄ້າລະຫວ່າງສອງປະເທດໄລຍະ 2008-2015 ໃຫ້ສຳເລັດຜົນຕາມເປົ້າໝາຍມູນຄ່າການຄ້າລະຫວ່າງສອງປະເທດບັນລຸ 1 ຕື້ ໂດລາສະຫະລັດໃນປີ 2010, 2 ຕື້ ໂດລາສະຫະລັດໃນປີ 2015. ສືບຕໍ່ບູລິມະສິດຜ່ອນຜັນໃຫ້ແກ່ກັນ ບົນພື້ນຖານການພົວພັນພິເສດທີ່ມີຢູ່ແລ້ວ, ສືບຕໍ່ປະຕິບັດບັນດາກົນໄກ ຜ່ອນຜັນດ້ານອັດຕາພາສີຂາເຂົ້າເຊິ່ງກັນ ແລະ ກັນ ສຳລັບສິນຄ້າທີ່ມີແຫລ່ງກຳເນີດຈາກສອງປະເທດ ຕາມທີ່ໄດ້ຕົກລົງກັນ; ຄົ້ນຄ້ວາເປີດກ້ວາງລາຍການບັນດາປະເພດສິນຄ້າທີ່ໄດ້ຮັບອັດຕາພາສີຂາເຂົ້າ 0%.

ນັບແຕ່ປີ 2009 ເປັນຕົ້ນໄປ, ສຳລັບບັນຊີສິນຄ້າທີ່ໄດ້ຮັບບູລິມະສິດຫລຸດຜ່ອນອັດຕາພາສີແຕ່ 0% ຫາ 50% ຂອງສອງຝ່າຍ ຈະໄດ້ສືບຕໍ່ປະຕິບັດໂດຍອັດຕະໂນມັດໃນຊຸມປີຕໍ່ໄປ; ຖ້າມີການປ່ຽນ

ແປງ ຫລື ເພີ້ມເຕີມໃໝ່ລາຍການສິນຄ້າໃນບັນຊີ, ສອງຝ່າຍຈະສືບຕໍ່ຄົ້ນຄ້ວາເປີດກ້ວາງອອກຕື່ມ. ຝ່າຍລາວສະເໜີຝ່າຍຫວຽດນາມພິຈາລະນາ ແກ້ໄຂສິ່ງເງື່ອນທີ່ໄດ້ເສຍພາສີ ໃຫ້ແກ່ບັນດາບໍລິສັດສິ່ງອອກ ປະເພດອາໄລ່ລິດຈັກຂອງລາວ ຕາມລາຍການສິນຄ້າທີ່ໄດ້ຮັບບູລິມະສິດ ທີ່ໄດ້ປະຕິບັດ ແຕ່ວັນທີ 1 ເດືອນ 1 ປີ 2008. ສືບຕໍ່ເພີ້ມທະວີການແລກປ່ຽນບົດຮຽນໃນຂົງເຂດຕ່າງໆ ທີ່ຕ່າງຝ່າຍມີຄວາມສົນໃຈ ໃນການ ເຊື່ອມໂຍງເຂົ້າກັບສາກົນ ແລະ ພາກພື້ນ, ການຄຸ້ມຄອງຕະຫລາດ; ປະສານສົມທົບກັນສະກັດກັ້ນການຄ້າຂາຍຫລົບຫລີກໜີພາສີ ແລະ ການຄ້າຂາຍທີ່ຜິດກົດໝາຍ.

ປະສານສົມທົບກັນສ້າງແຜນການຮ່ວມມື ລົງທຶນ ຂອງບັນດາວິສາຫະກິດສອງປະເທດ ທີ່ລົງທຶນເຂົ້າແຕ່ລະປະເທດໃນຊຸມປີຕໍ່ໜ້າ, ຊອກມາດຕະການ ເພື່ອເຮັດໃຫ້ແຫລ່ງພະລັງການລົງທຶນ ມີຫລາຍຮູບການທີ່ເໝາະສົມ, ຊອກມາດຕະການເປີດກ້ວາງການລົງທຶນໃນຂົງເຂດຕ່າງໆ ຢູ່ແຕ່ລະປະເທດ. ໂຄສະນາກົດໝາຍການລົງທຶນຂອງແຕ່ລະປະເທດ ດ້ວຍພາສາລາວ ແລະ ພາສາຫວຽດ ຢ່າງກ້ວາງຂວາງ; ສ້າງກົນໄກນະໂຍບາຍ, ບູລິມະສິດຜ່ອນຜັນ ແນໃສ່ຊຸກຍູ້ການລົງທຶນຂອງຫວຽດນາມ ຢູ່ລາວ ແລະ ການລົງທຶນຂອງລາວ ຢູ່ຫວຽດນາມ; ສິ່ງເສີມບັນດາວິສາຫະກິດລາວ ແລະ ຫວຽດນາມ, ສ້າງຕັ້ງຮູບແບບວິສາຫະກິດປະສົມ ເພື່ອຮ່ວມມືລົງທຶນນຳກັນ. ສ້າງເງື່ອນໄຂໃຫ້ບັນດາວິສາຫະກິດ ປະຕິບັດບັນດາຂໍ້ກຳນົດ, ກົນໄກ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງແຕ່ລະປະເທດຢ່າງຄົບຖ້ວນ; ປະຕິບັດຢ່າງເຂັ້ມງວດລະບອບລາຍງານເປັນປົກກະຕິຕໍ່ບັນດາອົງການທີ່ກ່ຽວຂ້ອງ ຂອງສອງຝ່າຍ.

ສິ່ງເສີມບັນດາວິສາຫະກິດ, ທຸກພາກສ່ວນເສດຖະກິດ ຂອງແຕ່ລະຝ່າຍ ລົງທຶນໃນຂົງເຂດອຸດສາຫະກຳ, ກະສິກຳ, ການປຸງແຕ່ງ, ພະລັງງານໄຟຟ້າ, ບໍ່ແຮ່, ການບໍລິການ... ຢູ່ແຕ່ລະປະເທດ; ບູລິມະສິດໃຫ້ແກ່ບັນດາໂຄງການທີ່ສ້າງວຽກເຮັດງານທຳ ຕິດພັນກັບການລົບລ້າງ ຄວາມທຸກຍາກ, ປະກອບສ່ວນເຮັດໃຫ້ສັງຄົມມີສະຖຽນລະພາບ, ເພີ້ມລາຍຮັບງົບປະມານແຫ່ງຊາດ ແລະ ມູນຄ່າການສິ່ງອອກ; ສິ່ງເສີມບັນດາວິສາຫະກິດໜຸ່ມຂອງສອງປະເທດ ຮ່ວມມືລົງທຶນ ແລະ ຊ່ວຍຊູຍູ້ໜູນ ເຊິ່ງກັນ ແລະ ກັນ ເພື່ອເພີ້ມກຳລັງຄວາມສາມາດ; ສ້າງຄັ້ງຊ່ວຍໜູນການພັດທະນາຊັບພະຍາກອນມະນຸດ ແລະ ກໍ່ສ້າງພື້ນຖານໂຄງລ່າງຢູ່ທ້ອງຖິ່ນຕ່າງໆ.

ຝ່າຍລາວສິ່ງເສີມບັນດາວິສາຫະກິດຫວຽດນາມ ມາລົງທຶນຜະລິດ, ປຸງແຕ່ງສິນຄ້າກະສິກຳ, ປ່າໄມ້ ແລະ ສິນຄ້າປະເພດອື່ນໆ ເພື່ອສິ່ງອອກ; ກໍ່ສ້າງພື້ນຖານໂຄງລ່າງ ຢູ່ເຂດການຄ້າຊາຍແດນ ແດນສະຫວັນ, ແຂວງສະຫວັນນະເຂດ ແລະ ເຂດດ່ານຊາຍແດນອື່ນໆ; ສ້າງບັນດາສູນການຄ້າຫວຽດນາມ ຢູ່ລາວ ແລະ ສູນການຄ້າຂອງລາວ ຢູ່ຫວຽດນາມ, ບັນດາຕົວເມືອງການຄ້າຂອງຫວຽດນາມ ຢູ່ນະຄອນຫລວງວຽງຈັນ, ຫລວງພະບາງ, ສະຫວັນນະເຂດ. ປະສານສົມທົບກັນສ້າງກົນໄກ, ນະໂຍບາຍ ບູລິມະສິດຜ່ອນຜັນໂດຍສອດຄ່ອງກັບຂໍ້ກຳນົດຂອງອົງການການຄ້າໂລກ (WTO) ເປັນພື້ນຖານ ໃຫ້ແກ່ການສ້າງຕັ້ງບັນດາເຂດປຸງແຕ່ງສິ່ງອອກ, ເຂດເສດຖະກິດເປີດ, ເຂດເສດຖະກິດພິເສດ ລຽບຕາມບັນດາເສັ້ນທາງເຊື່ອມຕໍ່ລະຫວ່າງສອງປະເທດ. ເພື່ອອຳນວຍຄວາມສະດວກໃຫ້ແກ່ບັນດາວິສາຫະກິດ, ສອງຝ່າຍປະສານສົມທົບກັນຈັດຕັ້ງກອງປະຊຸມສິ່ງເສີມການລົງທຶນເຂົ້າສູ່ລາວ ຢູ່ພາກໃຕ້ຫວຽດນາມໃນ ປີ 2009.

ສອງຝ່າຍເປັນເອກະພາບກັນ ສືບຕໍ່ສົ່ງເສີມການຊື້ຂາຍກະແສໄຟຟ້າ ຢູ່ລຽບຕາມຊາຍແດນ ສອງປະເທດ; ຊຸກຍູ້ການກໍ່ສ້າງໂຄງການໄຟຟ້ານ້ຳຕົກທີ່ກຳລັງດຳເນີນການກໍ່ສ້າງ ແລະ ບັນດາໂຄງການ ທີ່ໄດ້ເຊັນສັນຍາພັດທະນາໂຄງການ(PDA) ໃຫ້ປະຕິບັດຖືກຕ້ອງຕາມກຳນົດເວລາຂອງໂຄງການ; ສ້າງ ເງື່ອນໄຂເພື່ອໃຫ້ບັນດາວິສາຫະກິດປະຕິບັດຕາມ MOU ທີ່ໄດ້ເຊັນກັນ ແລະ ພິຈາລະນາເຊັນ MOU ບັນດາໂຄງການທີ່ຍັງບໍ່ທັນໄດ້ເຊັນ; ຊຸກຍູ້ບັນດາວິສາຫະກິດ ກະກຽມລົງທຶນກໍ່ສ້າງສາຍສົ່ງໄຟຟ້າ ໃຫ້ ສຳເລັດໄປຕາມກຳນົດເວລາຂອງບັນດາ ໂຄງການຜະລິດໄຟຟ້າ; ຮີບຮ້ອນເປັນເອກະພາບລາຄາຊື້ຂາຍ ກະແສໄຟຟ້າ.

ຝ່າຍຫວຽດນາມຮັບຊາບ ຂໍ້ສະເໜີຂອງຝ່າຍລາວ ກ່ຽວກັບລາຄາຊື້-ຂາຍໄຟຟ້າ ຕ້ອງຮັບປະ ກັນຜົນກຳໄລຂອງຜູ້ລົງທຶນ ຢ່າງສົມເຫດສົມຜົນ (ຕ່ຳສຸດແຕ່ 12% ຫາ 13%).

ສອງຝ່າຍເປັນເອກະພາບກັນຊຸກຍູ້ບັນດາວິສາຫະກິດຫວຽດນາມ ປະຕິບັດວຽກງານການຂອກ ຄົ້ນ, ສຳຫລວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃຫ້ຖືກຕ້ອງຕາມສັນຍາ ທີ່ໄດ້ເຊັນກັນ ແລະ ສືບຕໍ່ ສ້າງເງື່ອນໄຂສະດວກ ແລະ ອອກໃບອະນຸຍາດໃຫ້ແກ່ບັນດາວິສາຫະກິດຫວຽດນາມ ດຳເນີນການ ຂອກຄົ້ນ, ສຳຫລວດ, ຂຸດຄົ້ນແຮ່ທາດຢູ່ລາວ ເພື່ອຮັບໃຊ້ເປົ້າໝາຍການພັດທະນາເສດຖະກິດຂອງ ແຕ່ລະປະເທດ; ສົ່ງເສີມບັນດາວິສາຫະກິດສອງປະເທດຮ່ວມມືລົງທຶນ, ປຸງແຕ່ງ, ຍົກມູນຄ່າຂອງປະ ເພດແຮ່ທາດຕ່າງໆ ແນໃສ່ສ້າງວຽກເຮັດງານທຳ, ປະກອບສ່ວນລົບລ້າງຄວາມທຸກຍາກ ເຮັດໃຫ້ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີສະຖຽນລະພາບ.

ສອງຝ່າຍສ້າງເງື່ອນໄຂສະດວກ ເພື່ອດຶງດູດການລົງທຶນ ຂອງບັນດາພາກສ່ວນເສດຖະກິດ ເພື່ອ ຜະລິດບັນດາປະເພດສິນຄ້າສົ່ງອອກ ທີ່ເປັນທ່າແຮງ ແລະ ໄດ້ຮັບບູລິມະສິດໃນການລົງທຶນ; ສົ່ງເສີມ ບັນດາວິສາຫະກິດຫວຽດນາມລົງທຶນໃນການຜະລິດບັນດາປະເພດສິນຄ້າກະສິກຳ, ປ່າໄມ້ ທີ່ເປັນທ່າ ແຮງ, ລວມທັງການປູກໄມ້ອຸດສາຫະກຳຢູ່ເຂດຕ່າງໆ ໂດຍສອດຄ່ອງກັບແຜນກຳນົດການຈັດສັນທີ່ດິນ ແຫ່ງຊາດ ແລະ ແຜນກຳນົດການແບ່ງເຂດການຜະລິດກະສິກຳແບບຍືນຍົງ ແນໃສ່ສ້າງບັນດາເຂດວັດຖຸ ດິບຮັບໃຊ້ໃຫ້ແກ່ການປຸງແຕ່ງ; ການລ້ຽງສັດ; ສອງຝ່າຍສືບຕໍ່ຮ່ວມມືປົກປັກຮັກສາປ່າໄມ້ ແລະ ຂອກບັນ ດາມາດຕະການ ເພື່ອສະກັດກັ້ນການຕັດໄມ້ທຳລາຍປ່າ ແນໃສ່ປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນ. ລັດຖະບານລາວສືບຕໍ່ສ້າງເງື່ອນໄຂໃຫ້ແກ່ບັນດາວິສາຫະກິດຫວຽດນາມ ລົງທຶນໃນການ ຜະລິດກະສິກຳ ຕາມຮູບແບບ 3+2 ໃນເຂດຕ່າງໆ ທີ່ສາມາດຈັດສັນໃຫ້ໄດ້.

ຝ່າຍລາວຮັບຊາບ ຂໍ້ສະເໜີຂອງຝ່າຍຫວຽດນາມ ກ່ຽວກັບການເຊັນສັນຍາເຊົ່າທີ່ດິນໃຫ້ແກ່ ບັນດາໂຄງການປູກຕົ້ນໄມ້ອຸດສາຫະກຳ ຂອງບັນດາຫົວໜ່ວຍທຸລະກິດຫວຽດນາມ ທີ່ໄດ້ຮັບໃບອະນຸ ຍາດລົງທຶນ.

5- ສອງຝ່າຍເປັນເອກະພາບກັນຊຸກຍູ້ໂດຍໄວ ການຜັນຂະຫຍາຍບາດກ້າວຕໍ່ໄປເພື່ອປະຕິບັດ ການກວດກາສິນຄ້າ ແລະ ພາຫະນະຂົນສົ່ງ ຕາມຮູບການກວດກາ "ປ່ອງດຽວ ແລະ ຈຸດດຽວ" ຢູ່ດ່ານ ສາກົນແດນສະຫວັນ-ລາວບາວ ໂດຍສອດຄ່ອງກັບຂໍ້ກຳນົດຂອງຂອບການຮ່ວມມື GMS. ໃນຕໍ່ໜ້າ,

ສອງຝ່າຍ ຈະຈັດບັນດາກອງປະຊຸມເຜີຍແຜ່ເຊື້ອມຊີມຂໍ້ຕົກລົງຮ່າໂນ້ຍ 2007 ເພື່ອປະຕິບັດຢ່າງເປັນເອກະພາບ ແຕ່ສູນກາງຮອດ ທ້ອງຖິ່ນ ຢູ່ບັນດາຄູ່ດ່ານຊາຍແດນ ລະຫວ່າງສອງປະເທດ. ຝ່າຍລາວ ຈະຊຸກຍູ້ການລົງທຶນກໍ່ສ້າງ, ປັບປຸງສະຖານທີ່ເຮັດວຽກ, ພາຫະນະການຕິດຕໍ່ສື່ສານ ແລະ ບັນດາພື້ນຖານໂຄງລ່າງອື່ນໆ ເພື່ອຕອບສະໜອງຄວາມຕ້ອງການຂອງຮູບການກວດກາດັ່ງກ່າວ.

ສອງຝ່າຍຊຸກຍູ້ການສ້າງຕັ້ງບໍລິສັດຮ່ວມທຸລະກິດ ລາວ-ຫວຽດນາມ ເພື່ອນຳໃຊ້ທ່າເຮືອຫວຸງອ່າງ. ມອບໃຫ້ຂະແໜງການຄົມມະນາຄົມ ຂົນສົ່ງສອງປະເທດ ສືບຕໍ່ເປັນເຈົ້າການປະສານສົມທົບກັບບັນດາອົງການທີ່ກ່ຽວຂ້ອງ ປະຕິບັດຂໍ້ຕົກລົງກ່ຽວກັບການນຳໃຊ້ທ່າເຮືອຫວຸງອ່າງ ທີ່ໄດ້ເຊັນກັນຄັ້ງວັນທີ 20/07/2001. ດຳເນີນການດັດແກ້ສັນຍາ, ອະນຸສັນຍາການຂົນສົ່ງທາງບົກ ແລະ ບັນດາເນື້ອໃນທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບຂໍ້ຕົກລົງ **"ຮ່າໂນ້ຍ 2007"** ແລະ ບັນດາເອກະສານທີ່ໄດ້ເຊັນກັນ ໃນຂອບການຮ່ວມມືອະນຸພາກພື້ນແມ່ນ້ຳຂອງ (**GMS**). ຝ່າຍລາວສະແດງຄວາມຂອບໃຈຕໍ່ລັດຖະບານຫວຽດນາມ ທີ່ໄດ້ຊ່ວຍເຫລືອສ້າງບົດລາຍງານການສຶກສາເບື້ອງຕົ້ນທາງລົດໄຟ ແຕ່ທ່າແຂກ-ມຸຢາ. ລັດຖະບານລາວ ພວມຕັ້ງໜ້າຊອກແຫລ່ງທຶນຊ່ວຍເຫລືອຈາກປະເທດຕ່າງໆ ເພື່ອຜັນຂະຫຍາຍໂຄງການດັ່ງກ່າວ. ຝ່າຍລາວສົ່ງເສີມບັນດາວິສາຫະກິດຫວຽດນາມມາລົງທຶນຢູ່ລາວ ໃນຂົງເຂດການບິນບໍລິການ, ໂທລະຄົມມະນາຄົມ.

6- ສອງຝ່າຍປະສານສົມທົບກັນຢ່າງແໜ້ນແຟ້ນໃນການຄຸ້ມຄອງແຮງງານຫວຽດນາມ ຢູ່ລາວ ຕາມຂໍ້ກຳນົດກົດໝາຍ ທີ່ໄດ້ປະກາດໃຊ້, ພ້ອມທັງເພີ້ມທະວີການສຶກສາອົບຮົມບັນດາແຮງງານຫວຽດນາມໃຫ້ເຂົ້າໃຈ ແລະ ເຄົາລົບນັບຖືຮີດຄອງປະເພນີຂອງລາວ. ຝ່າຍລາວ ສ້າງເງື່ອນໄຂສະດວກໃຫ້ແກ່ແຮງງານຫວຽດນາມ ໃນການພັກຢູ່ອາໄສ ແລະ ເຮັດວຽກຢູ່ລາວ ໂດຍສອດຄ່ອງກັບລະບຽບກົດໝາຍຂອງລາວ.

7- ສອງຝ່າຍເປັນເອກະພາບກັນ ເພີ້ມທະວີການຮ່ວມມື ໃນຂົງເຂດໄປສະນີ, ໂທລະຄົມມະນາຄົມ ບົນພື້ນຖານສັນຍາລະຫວ່າງສອງລັດຖະບານລາວ ແລະ ຫວຽດນາມ ທີ່ໄດ້ເຊັນກັນ ໃນວັນທີ 06/10/2008.

8- ສອງຝ່າຍຢືນຢັນສືບຕໍ່ປະຕິບັດສັນຍາວ່າດ້ວຍຊາວຕ່າງດ້າວ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ທີ່ໄດ້ເຊັນກັນຄັ້ງວັນທີ 03/04/1993.

9- ສອງຝ່າຍເປັນເອກະພາບປະຕິບັດໃນປີ 2009:

- ສຳເລັດມອບ-ຮັບ ແລະ ຊຳລະສະສາງໃຫ້ຂາດຕົວບັນດາໂຄງການ: (I) ໂຄງການກໍ່ສ້າງເພີ້ມເຕີມໂຮງຮຽນວິຊາຊີບແຂວງບໍ່ແກ້ວໃຫ້ສົມບູນ, (II) ໂຮງຮຽນວິທະຍາໄລການເງິນດົ່ງຄຳຊ້າງ.

- ບັນດາໂຄງການ ທີ່ບັນຈຸທຶນໃນແຜນການປີ 2008, ປະຕິບັດໃນປີ 2009: (I)ສ້ອມແປງຍົກລະດັບຫໍພິພິທະພັນໄກສອນ ພົມວິຫານ, (II) ກໍ່ສ້າງສະຖານີຖ່າຍທອດວິທະຍຸ, ໂທລະພາບເຂດ ຢູ່ແຂວງຈຳປາສັກ, (III) ກໍ່ສ້າງສະຖານີຖ່າຍທອດວິທະຍຸ, ໂທລະພາບເຂດ ຢູ່ແຂວງຫລວງພະບາງ, (IV) ໂຮງຮຽນສິລະປະດົນຕີແຫ່ງຊາດລາວ, (V) ກໍ່ສ້າງດ່ານສາກົນພູເກົ້ອ ແຂວງອັດຕະປື.

- ສືບຕໍ່ປະຕິບັດບັນດາໂຄງການ: (I) ແປນີ້ພິນເລືອກເຟັ້ນຂອງມາກ-ອັງແກນ-ເລນິນ ແລະ ແນວ ຄິດໂຮ່ຈິມິນ ຈາກພາສາຫວຽດເປັນພາສາລາວ, (II) ປັກຫລັກໝາຍຖີ່ ແລະ ບູລະນະລະບົບ ຫລັກໝາຍຊາຍແດນປະເທດລາວ-ຫວຽດນາມ, (III) ຮຽບຮຽງປັ້ມປະຫວັດສາດການພົວພັນພິເສດ ລາວ-ຫວຽດນາມ, (IV) ກໍ່ສ້າງສວນສາທາລະນະ ໄຊເສດຖາ ແລະ ສະໜາມຫລວງທາດຫລວງ, (V) ສ້າງແຜນຍຸດທະສາດການຮ່ວມມື ລາວ-ຫວຽດນາມ ໄລຍະ 2011-2020 ໂດຍຕິດພັນກັບການ ສ້າງແຜນການ ແລະ ຍຸດທະສາດການພັດທະນາຮອດປີ 2020 ຂອງແຕ່ລະປະເທດ, (VI) ສູນສຳ ເນົາເອກະສານແຫ່ງຊາດລາວ, (VII) ໂຮງຮຽນມັດທະຍົມສົມບູນມິດຕະພາບລາວ-ຫວຽດນາມ, (VIII) ໂຄງການຟື້ນຟູໂຮງພິມແຜນທີ່ກອງທັບລາວ, (IX) ສ້າງແຜນກຳນົດແບ່ງເຂດປູກຕົ້ນໄມ້ອຸດ ສາຫະກຳຢູ່ພາກໃຕ້ລາວ, (X) ສູນວິທະຍາສາດເຕັກນິກອາຍາ, ກະຊວງປ້ອງກັນຄວາມສະຫງົບລາວ, (XI) ສູນຝຶກກິລາແຫ່ງຊາດລາວ.

- ກະກຽມບັນດາໂຄງການໃໝ່: (I) ຍຸດທະສາດການພັດທະນາກະສິກຳ, ຊົນນະບົດ ແລະ ຊາວ ກະສິກອນລາວ, (II) ຊ່ວຍໜູນການພັດທະນາກະສິກຳ, ຊົນນະບົດ ແລະ ການຜະລິດສິນຄ້າຢູ່ບັນດາ ໝູ່ບ້ານໃນເຂດຊົນລະປະທານດົງໂພສີ ແລະ ທ່າພະ-ໜອງພົງ, (III) ກໍ່ສ້າງສະຖາບັນການເມືອງ-ການ ປົກຄອງແຫ່ງຊາດລາວ ໄລຍະ **II**, (IV) ຍົກລະດັບຄວາມສາມາດຂະແໜງການຍຸຕິທຳລາວ, (V) ໂຮງ ຮຽນສາມັນກົນນອນຊົນເຜົ່າແຂວງຫົວພັນ, (VI) ສ້າງແຜນການສົ່ງເສີມຍົກລະດັບຄວາມສາມາດການ ຄຸ້ມຄອງລັດດ້ານໄປສະນີ, ຄົມມະນາຄົມ.

10- ກ່ຽວກັບສິນເຊື່ອຜ່ອນຜັນ: ກະຊວງການເງິນສອງປະເທດສຳເລັດການເຈລະຈາ, ເຊັນສັນ ຍາສິນເຊື່ອຜ່ອນຜັນໃຫ້ແລ້ວກ່ອນເດືອນ 02 ປີ 2009 ເພື່ອຜັນຂະຫຍາຍໂຄງການກໍ່ສ້າງເສັ້ນທາງ **2E** ເມືອງຂວາ-ໄຕຈາງ ຕາມທີ່ໄດ້ຕົກລົງກັນ ໂດຍໄວ.

11- ສອງຝ່າຍເປັນເອກະພາບກັນຜັນຂະຫຍາຍ ແລະ ຕິດຕາມກວດກາ, ກວດການ ແລະ ລາຍ ງານການປະຕິບັດບັນດາກິດຈະການ, ໂຄງການ ແລະ ບັນດາຂໍ້ຕົກລົງ ທີ່ໄດ້ເຊັນກັນຢ່າງເປັນປົກກະຕິ. ປະສານສົມທົບກັນຢ່າງແໜ້ນແຟ້ນ ເພື່ອປັບປຸງດັດແປງເພີ້ມເຕີມ ແລະ ເຊັນ "ຂໍ້ຕົກລົງກ່ຽວກັບລະບຽບ ການການເງິນ ແລະ ການຄຸ້ມຄອງບັນດາໂຄງການທີ່ນຳໃຊ້ທຶນຊ່ວຍເຫລືອລ້າ ຂອງລັດຖະບານຫວຽດ ນາມ ໃຫ້ແກ່ລັດຖະບານລາວ ທີ່ໄດ້ເຊັນກັນໃນວັນທີ 15 ເດືອນ 1 ປີ 2002" ສະບັບໃໝ່ ໂດຍສອດ ຄ່ອງກັບກົນໄກ, ນະໂຍບາຍ ທີ່ປະກາດໃຊ້ໃນປະຈຸບັນຂອງແຕ່ລະປະເທດ.

ສອງຝ່າຍເປັນເອກະພາບປະສານສົມທົບກັນແລກປ່ຽນ ເພື່ອເຫັນພ້ອມກັນໃນບັນດາໂຄງການ ຮ່ວມມືໃນກອບ ASEAN, GMS, ACMECS, CLV, CLV+J, CLMV, ແລວທາງເສດຖະກິດຕາເວັນ ອອກ-ຕາເວັນຕົກ(EWEC),... ເຂົ້າສູ່ເປົ້າໝາຍການພັດທະນາ ແລະ ການຮ່ວມມືຂອງສອງປະເທດ; ສອງຝ່າຍຮ່ວມມືຢ່າງແໜ້ນແຟ້ນກັບບັນດາປະເທດທີ່ກ່ຽວຂ້ອງອື່ນໆປະຕິບັດສັນຍາແມ່ນ້ຳຂອງປີ 1995 ແນໃສ່ພັດທະນາ ແລະ ຄຸ້ມຄອງຊັບພະຍາກອນນ້ຳໃນອ່າງແມ່ນ້ຳຂອງ ໃຫ້ຍືນຍົງ.

ສືບຕໍ່ປະຕິບັດການຕົກລົງ ກ່ຽວກັບການຄຸ້ມຄອງເປັນເອກະພາບການນຳໃຊ້ທຶນຊ່ວຍເຫລືອຂອງ ລັດຖະບານຫວຽດນາມ ໃຫ້ແກ່ລັດຖະບານລາວ ຕາມຫລັກການ " **ທຸກຂໍ້ຕົກລົງຂອງບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ, ບັນດາການຈັດຕັ້ງ, ອົງການມະຫາຊົນ ທີ່ຕ້ອງການນຳໃຊ້ທຶນຊ່ວຍເຫລືອ ຂອງ ລັດຖະບານ ຕ້ອງໄດ້ຮັບການຕົກລົງເຫັນດີ ຂອງສອງລັດຖະບານກ່ອນ ຈຶ່ງລົງນາມກັນ** "; ສົ່ງເສີມບັນດາ ກະຊວງ, ຂະແໜງການ, ທ້ອງຖິ່ນ, ບັນດາການຈັດຕັ້ງ, ອົງການມະຫາຊົນ, ສືບຕໍ່ຮ່ວມມືຊ່ວຍເຫລືອເຊິ່ງ ກັນ ແລະ ກັນ ຕາມເງື່ອນໄຂ, ຄວາມສາມາດຕົວຈິງຂອງຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນຂອງ ຂອງຕົນ. ຝ່າຍຫວຽດນາມປະສານສົມທົບກັບຝ່າຍລາວ ຊອກຫາແຫລ່ງທຶນຊ່ວຍເຫລືອຈາກບັນດາອົງ ການຈັດຕັ້ງປະເທດອື່ນໆ ເພື່ອຂັນຂະຫຍາຍບັນດາກິດຈະການ, ໂຄງການຕ່າງໆຢູ່ລາວ.

12- ຝ່າຍຫວຽດນາມ ເຊີນບັນດາສະຫາຍການນຳຂັ້ນສູງແຫ່ງລັດ ສປປ ລາວ ພ້ອມດວ້ຍຄອບ ຄົວໄປຫວຽດນາມ ເພື່ອກວດສຸຂະພາບ, ປິ່ນປົວ ແລະ ພັກຜ່ອນ.

ຝ່າຍລາວ ເຊີນບັນດາສະຫາຍການນຳຂັ້ນສູງແຫ່ງລັດ ສສ ຫວຽດນາມ ພ້ອມດ້ວຍຄອບຄົວ ມາພັກຜ່ອນຢູ່ລາວ.

13- ສອງຝ່າຍຕົກລົງກັນ ຈະດຳເນີນກອງປະຊຸມຄັ້ງທີ 32 ຂອງຄະນະກຳມາທິການຮ່ວມມື ລະຫວ່າງລັດຖະບານຫວຽດນາມ ແລະ ລັດຖະບານລາວ ກ່ຽວກັບການຮ່ວມມືດ້ານເສດຖະກິດ, ວັດທະ ນະທຳ, ວິທະຍາສາດ-ເຕັກນິກ ໃນຕົ້ນປີ 2010 ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສ່ວນວັນເວລາ ແລະ ສະຖານທີ່ລະອຽດ ຈະແຈ້ງຜ່ານທາງການທູດ.

ບົດບັນທຶກສະບັບນີ້ ໄດ້ລົງນາມຮ່ວມກັນຢູ່ທີ່ນະຄອນໂຮ່ຈິມິນ, ວັນທີ 08 ເດືອນມັງກອນ (01) ປີ 2009, ເປັນສອງສະບັບຕົ້ນ ດ້ວຍພາສາຫວຽດ ແລະ ພາສາລາວ, ທັງສອງສະບັບລ້ວນແຕ່ມີຄຸນຄ່າ ເທົ່າທຽມກັນ.

ຕາງໜ້າລັດຖະບານ	**ຕາງໜ້າລັດຖະບານ**
ສາທາລະນະລັດ ສັງຄົມນິຍົມຫວຽດນາມ	**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
ຫງວ໋ຽນ ຊິງຮຸ່ງ,	**ສົມສະຫວາດ ເລ່ງສະຫວັດ,**
ຮອງ ນາຍົກລັດຖະມົນຕີ ຜູ້ປະຈຳການ	**ຮອງ ນາຍົກລັດຖະມົນຕີ ຜູ້ປະຈຳການ**

PTT Nguyễn Sinh Hùng

ສາລະບານ ກ

ບັນຊີລາຍຊື່ຄະນະຜູ້ແທນລັດຖະບານ ສສ ຫວຽດນາມ ເຂົ້າຮ່ວມກອງປະຊຸມ ຄັ້ງທີ 31 ຂອງຄະນະກຳມາທິການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ ລະຫວ່າງ ລັດຖະບານ ສສ ຫວຽດນາມ ແລະ ລັດຖະບານ ສປປ ລາວ

(ນະຄອນໂຮ່ຈິມິນ, ວັນທີ 08 ມັງກອນ (01) 2009)

1. ສະຫາຍ ຫງວຽນ ຊີງ ຮຸ່ງ, ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ, ປະທານຄະນະກຳມາທິການຮ່ວມມື ຫວຽດນາມ-ລາວ ເປັນຫົວໜ້າຄະນະ,
2. ສະຫາຍ ຫງວຽນ ຮຸຍ ກວາງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ,
3. ສະຫາຍ ເຈືອງ ວັນ ດວານ, ລັດຖະມົນຕີຊ່ວຍວ່າການກະຊວງແຜນການ ແລະ ລົງທຶນ, ຮອງປະທານ ຄະນະກຳມາທິການຮ່ວມມືຫວຽດນາມ-ລາວ,
4. ສະຫາຍ ຟາມ ຊວນ ເຊີນ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ,
5. ສະຫາຍ ໂຮ່ ຊວນ ເຊີນ, ລັດລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ,
6. ສະຫາຍ ເຈີ່ນ ຊວນ ຮ່ຳ, ລັດຖະມົນຕີຊ່ວຍວ່າການກະຊວງການເງິນ,
7. ສະຫາຍ ຫງວຽນ ແທ່ງ ບຽນ, ລັດຖະມົນຕີຊ່ວຍວ່າການກະຊວງອຸດສະຫາກຳ-ການຄ້າ,
8. ສະຫາຍ ເລ ແມ້ງ ຮຸ່ງ, ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ-ຂົນສົ່ງ,
9. ສະຫາຍ ເລ ຕຸ໋ງ ເຖາະ, ລັດຖະມົນຕີຊ່ວຍວ່າການກະຊວງວັດທະນະທຳ, ກີລາ ແລະ ທ່ອງທ່ຽວ,
10. ສະຫາຍ ຟາມ ຫວູ ລວມ, ລັດຖະມົນຕີຊ່ວຍວ່າການກະຊວງສຶກສາ ແລະ ກໍ່ສ້າງ,
11. ສະຫາຍ ເຈີ່ນ ເຍິດ ແທ່ງ, ຫົວໜ້າກົມ, ເລຂາຄະນະກຳມາທິການຮ່ວມມືຫວຽດນາມ-ລາວ, ກະຊວງແຜນການ ແລະ ລົງທຶນ,
12. ສະຫາຍ ຫງວຽນ ຍຸຍ ກຸ້ຍ, ຮອງຫົວໜ້າກົມ, ຫ້ອງວ່າການລັດຖະບານ,
13. ສະຫາຍ ຟາມ ແທງ ຕຸ໋ງ, ຮອງຫົວໜ້າກົມ, ກົມຮ່ວມມືສາກົນ, ກະຊວງຄົມມະນາຄົມ-ຂົນສົ່ງ,
14. ສະຫາຍ ກວນ ຍຸຍ ເງິນ ຮ່ຳ, ຫົວໜ້າກົມ, ກົມຮ່ວມມືສາກົນ, ກະຊວງວັດທະນະທຳ ແລະ ໂທລະຄົມ ມະນາຄົມ,
15. ສະຫາຍ ຈິ ດຶກ ຮ່າຍ, ຮອງຫົວໜ້າກົມ, ກົມກົງສູນ, ກະຊວງການຕ່າງປະເທດ
16. ສະຫາຍ ເລ ທງອກ ດິ, ຮອງຫົວໜ້າກົມ, ກົມຮ່ວມມືສາກົນ, ກະຊວງວັດທະນະທຳ, ກີລາ ແລະ ທ່ອງທ່ຽວ,
17. ສະຫາຍ ໂຮ່ ດຶກ ເຟືອງ, ທີ່ປຶກສາການຄ້າ ຫວຽດນາມ ປະຈຳລາວ,
18. ສະຫາຍ ດ່ວານ ເຖາະ ນາມ, ທີ່ປຶກສາເສດຖະກິດ-ວັດທະນະທຳຫວຽດນາມ ປະຈຳລາວ,
19. ສະຫາຍ ນ. ຟາມ ທິ ຮີ່ງ ແທງ, ຮອງຫົວໜ້າກົມ, ກະຊວງອຸດສາຫະກຳ-ການຄ້າ,
20. ສະຫາຍ ນ. ຫງວຽນ ທິ ແທງ ຮ່ຽນ, ຮອງຫົວໜ້າກົມຮ່ວມມືສາກົນ, ກະຊວງສຶກສາ ແລະ ກໍ່ສ້າງ,

21. ສະຫາຍ ຫວູ ວັນ ທ້າຍ,	ຮອງຫົວໜ້າກົມຮ່ວມມືສາກົນ, ກະຊວງອຸດສາຫະກຳ-ການຄ້າ,
22. ສະຫາຍ ເຈີ່ນ ກົມ ລອງ,	ຮອງຫົວໜ້າກົມຮ່ວມມືສາກົນ, ກະຊວງກະສິກຳ ແລະ ພັດທະນາຊົນນະບົດ,
23. ສະຫາຍ ຕ້າ ຍຸຍ ຈົ້ງ,	ຮອງຫົວໜ້າກົມອາຊີຕາເວັນອອກສ່ຽງໃຕ້, ກະຊວງການຕ່າງປະເທດ,
24. ສະຫາຍ ນ. ທຽງ ທິ ບິກ ເງິນ,	ຮອງຫົວໜ້າກົມຮ່ວມມືສາກົນ, ກະຊວງວັດທະນະທຳ, ກິລາ ແລະ ທ່ອງທ່ຽວ,
25. ສະຫາຍ ທຽງ ດືກ ຮ່ວາ,	ອຳນວຍການສູນຮ່ວມມືຫວຽດນາມ-ລາວ, ກະຊວງກະສິກຳ ແລະ ພັດທະນາຊົນນະບົດ,
26. ສະຫາຍ ຈິ ດືກ ເອິນ,	ວິຊາການກົມເງິນຕາຕ່າງປະເທດ, ກະຊວງການເງິນ,
27. ສະຫາຍ ທຽງ ທຽອກ ທຽນ,	ວິຊາການກົມຮ່ວມມືສາກົນ, ກະຊວງຄົມມະນາຄົມ-ຂົນສົ່ງ,
28. ສະຫາຍ ຕັ໋ງ ຕ໋ຽນ ຍຸ້ງ,	ວິຊາການ, ກົມອາຊີອອກສ່ຽງໃຕ້, ກະຊວງການຕ່າງປະເທດ,
29. ສະຫາຍ ທຽງ ດ໋ຽ ກຽນ,	ວິຊາການກົມອາຊີປາຊີຟິກ, ກະຊວງອຸດສາຫະກຳແລະການຄ້າ,
30. ສະຫາຍ ເລ ວັນ ຕູ້,	ວິຊາການກົມສັ່ງລວມເສດຖະກິດ, ກະຊວງການຕ່າງປະເທດ,
31. ສະຫາຍ ທຽງ ວັນ ກ໋ໍ,	ວິຊາການກົມຮ່ວມມືສາກົນ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ,
32. ສະຫາຍ ທຽງ ທຽອກ ຖ໋ຽ,	ວິຊາການກົມຮ່ວມມືສາກົນ, ກະຊວງສຶກສາ ແລະ ກ໋ໍ່ສ້າງ,
33. ສະຫາຍ ດ່າວ ທຽອກ ຕວ໋ຽນ,	ວິຊາການກົມຮ່ວມມືສາກົນ, ກະຊວງວັດທະນະທຳ ແລະ ໂທລະຄົມມະນາຄົມ,
34. ສະຫາຍ ທຽງ ມ໋ຽ ເຕ໋ີມ,	ວິຊາການກົມລາວ ແລະ ກຳປູເຈ໋ຍ, ຄະນະພິວພັນຕ່າງປະເທດ ສູນກາງພັກ,
35. ສະຫາຍ ເຈີ່ນ ວັນ ກຽນ,	ວິຊາການກົມພິວພັນເສດຖະກິດຕ່າງປະເທດ, ກະຊວງແຜນການ ແລະ ລົງທຶນ,
36. ສະຫາຍ ຟ່ານ ວັນ ແຄງ,	ວິຊາການກົມພິວພັນເສດຖະກິດຕ່າງປະເທດ, ກະຊວງແຜນການ ແລະ ລົງທຶນ,
37. ສະຫາຍ ທຽງ ວັນ ແທ໋ງ,	ວິຊາການກົມພິວພັນເສດຖະກິດຕ່າງປະເທດ, ກະຊວງແຜນການແລະລົງທຶນ,
38. ສະຫາຍ ເລ ຮ໋ົ່ງ ວ໋ົ່ງ,	ວິຊາການກົມພິວພັນເສດຖະກິດຕ່າງປະເທດ, ກະຊວງແຜນການແລະລົງທຶນ,
39. ສະຫາຍ ທຽງ ດ໋ົ່ງ ບ໋ໍ,	ວິຊາການກົມພິວພັນເສດຖະກິດຕ່າງປະເທດ, ກະຊວງແຜນການແລະລົງທຶນ,
40. ສະຫາຍ ເລ ແມ໋ງ ຮູ໋່ງ,	ວິຊາການກົມພິວພັນເສດຖະກິດຕ່າງປະເທດ, ກະຊວງແຜນການແລະລົງທຶນ

ສາລະບານ ຂ

ບັນຊີລາຍຊື່ຄະນະຜູ້ແທນລັດຖະບານ ສປປ ລາວ ເຂົ້າຮ່ວມກອງປະຊຸມ ຄັ້ງທີ 31 ຂອງຄະນະກຳມາທິການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ ລະຫວ່າງ ລັດຖະບານ ສສ ຫວຽດນາມ ແລະ ລັດຖະບານ ສປປ ລາວ

(ນະຄອນໂຮ່ຈິມິນ, ວັນທີ 08 ມັງກອນ (01) 2009)

---

1. ສະຫາຍ ສົມສະໜາດ ເລັ່ງສະໜວັດ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ, ປະທານຄະນະກຳມາທິການຮ່ວມມື ລາວ-ຫວຽດນາມ ເປັນຫົວໜ້າຄະນະ,
2. ສະຫາຍ ທອງນີ ພົມວິໄຊ ລັດຖະມົນຕີຊ່ວຍວ່າການກະຊວງແຜນການ ແລະການລົງທຶນ, ຮອງປະທານຄະນະກຳມາທິການຮ່ວມ ມືລາວ-ຫວຽດນາມ ເປັນຄະນະ,
3. ສະຫາຍ ນ. ສູນທອນ ໄຊຍະຈັກ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມແຫ່ງສປປລາວ ປະຈຳ ສສ ຫວຽດນາມ ເປັນຄະນະ,
4. ສະຫາຍ ສົມບູນ ຣາຊາສົມບັດ ລັດຖະມົນຕີຊ່ວຍວ່າການກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ,
5. ສະຫາຍ ດຣ. ຕີ ພົມມະສັກ ລັດຖະມົນຕີຊ່ວຍວ່າການກະຊວງກະສິກຳ-ປ່າໄມ້ ເປັນຄະນະ,
6. ສະຫາຍ ນ. ເຂັມມະນີ ພົນເສນາ ລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ,
7. ສະຫາຍ ນ. ວຽງທອງ ສີພັນດອນ ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນຄະນະ,
8. ສະຫາຍ ນ. ແສງເດືອນ ຫລ້າຈັນທະບູນ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ເປັນຄະນະ,
9. ສະຫາຍ ເທດລະຄອນ ດວງສົນທິ ກົງສູນໃຫຍ່ແຫ່ງສປປລາວ ປະຈຳນະຄອນໂຮ່ຈິມິນ ເປັນຄະນະ,

ຄະນະວິຊາການປະກອບດ້ວຍ:

1. ສະຫາຍ ພອນສຸກ ຄຸນສົມບັດ ຫົວໜ້າຫ້ອງການຄະນະກຳມາທິການຮ່ວມມືລາວ-ຫວຽດນາມ ເປັນຫົວໜ້າຄະນະ,
2. ສະຫາຍ ລັດຕະນະມະນີ ຄຸນນິວົງ ຫົວໜ້າຫ້ອງການກະຊວງກະຊວງ ໂຍທາທິການ ແລະ ຂົນສົ່ງ ເປັນຄະນະ,
3. ສະຫາຍ ດຣ. ພວງປຣິສັກ ປຣະວົງວົງຄຳ ຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ,
4. ສະຫາຍ ຜາສຸກ ພົມມະຣັກ ວ່າການຫົວໜ້າກົມກໍ່ສ້າງພະນັກງານ, ຄະນະຈັດຕັ້ງສູນກາງພັກ ເປັນຄະນະ,

5. ສະຫາຍ ດຣ. ບຸນປັນ ໄຊມຸນຕຼີ	ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງສຶກສາທິການ ເປັນຄະນະ,
6. ສະຫາຍ ດຣ. ບຸນເຖິງ ເພັງທະວົງສາ	ຮອງຫົວໜ້າຫ້ອງການກະຊວງພະລັງງານແລະບໍ່ແຮ່ເປັນຄະນະ,
7. ສະຫາຍ ທັດສະດີ ສີສຸລາດ	ຮອງຫົວໜ້າກົມໄຟຟ້າ, ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ,
8. ສະຫາຍ ສີລາ ວຽງແກ້ວ	ຮອງຫົວໜ້າຫ້ອງການກະຊວງການເງິນ ເປັນຄະນະ,
9. ສະຫາຍ ສົມຫວັງ ນິນທະວົງ	ທີ່ປຶກສາດ້ານເສດຖະກິດ-ການຄ້າ, ສະຖານເອກອັກຄະລັດຖະທູດລາວ ປະຈຳ ສສ ຫວຽດນາມເປັນຄະນະ,
10. ສະຫາຍ ພູເຂົາ ທອງມະນີລາ	ຮອງຫົວໜ້າຫ້ອງການ ຄະນະກຳມາທິການຮ່ວມມື ລາວ - ຫວຽດນາມ ເປັນຄະນະ,
11. ສະຫາຍ ສິງຫາ ສິງສະຫວັນ	ຮອງຫົວໜ້າຫ້ອງການ ຄະນະກຳມາທິການຮ່ວມມື ລາວ - ຫວຽດນາມ ເປັນຄະນະ, (ທັງຊ່ວຍແປພາສາ ໃຫ້ຄະນະວິຊາການພົບປະ),
12. ສະຫາຍ ຄຳເຜີຍ ແກ້ວກົມມາລີ	ເລຂາທ່ານ ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ ເປັນຄະນະ,
13. ສະຫາຍ ວຽງສະຫວັນ ວີໄລພອນ	ເລຂາທີ 1, ສະຖານເອກອັກຄະລັດຖະທູດລາວ ປະຈຳ ສສ ຫວຽດນາມ ເປັນຄະນະ,
14. ສະຫາຍ ວຽງໄຊ ດາຣາແສນ	ຫົວໜ້າພະແນກອາຊຽນ, ຄະນະພົວພັນຕ່າງປະເທດສູນກາງພັກ ເປັນຄະນະ(ທັງຊ່ວຍແປພາສາໃຫ້ຄະນະຜູ້ແທນຂັ້ນລັດຖະບານ)
15. ສະຫາຍ ໄຊທິເດດ ອິນທະສອນ	ຫົວໜ້າພະແນກຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ,
16. ສະຫາຍ ນ. ສຸດສະດາ ມະນີໄຊ	ຫົວໜ້າພະແນກການເງິນ, ກະຊວງແຜນການ ແລະ ການລົງທຶນ ເປັນຄະນະ,
17. ສະຫາຍ ນ. ທິບພະຈັນ ຊາພັກດີ	ວິຊາການຫ້ອງການກະຊວງແຜນການ ແລະ ການລົງທຶນ ເປັນຄະນະ,
18. ສະຫາຍ ສຸລິກັນ ຈອມສີປະເສີດ	ວິຊາການຫ້ອງການ ຄະນະກຳມາທິການຮ່ວມມື ລາວ - ຫວຽດນາມ ເປັນຄະນະ,
19. ສະຫາຍ ສີສົມພອນ ຄຳພາວົງ	ວິຊາການຫ້ອງການ ຄະນະກຳມາທິການຮ່ວມມື ລາວ - ຫວຽດນາມ ເປັນຄະນະ.
